# ໂຮງຮຽນວັນອາທິດ

**ວັນອາທິດ ທີ 12 ກໍຣະກົດ 2020 (07-12–2020)**

---

**ຈຸດສູງສຸດໃນຄວາມຫວັງຂອງພວກເຮົາ.**

ເມື່ອໃດທີ່ຈຸດໝາຍປາຍທາງຄຸ້ມຄ່າກັບການເດີນທາງ?

**ຈຸດສຳຄັນໃນບົດຮຽນ:** ສິ່ງທີ່ພວກເຮົາມີຄວາມຫວັງໃນພຣະຄຣິດມື້ນີ້ງກໍຈະໄດ້ຮັບຢ່າງຄົບບໍຣິບູນ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຊີ ແອສ ລູອີສ (C.S. Lewis) ໄດ້ດຳເນີນຊີວິດຜ່ານສົງຄາມໂລກທັງສອງຄັ້ງແລະໄດ້ເຂົ້າໃຈເປັນຢ່າງດີເຖິງຄວາມທຸກໂສກເສົ້າໃນຊ່ວງເວລານັ້ນ. ຫຼາຍຄົນໄດ້ຮັບຄວາມເດືອດຮ້ອນຢ່າງຫຼວງຫຼາຍໃນປະເທດອັງກິດຂອງລາວ. ນອກຈາກນັ້ນ, ລູອີສ ຍັງໄດ້ຮັບຄວາມເສົ້າສລົດໃຈຕໍ່ການຕາຍຂອງພັນລະຍາຂອງລາວ, ຈອຍ, ຜູ້ທີ່ໄດ້ເສັຽຊີວິດດ້ວຍຄວາມເຈັບປ່ວຍໃນລະຍະອັນສັ້ນພາຍຫຼັງການແຕ່ງງານຂອງພວກເຂົາ. ເຖິງຢ່າງໃດກໍ່ຕາມຄວາມທຸກທໍຣະມານແລະການທໍ້ຖອຍໝົດກຳລັງໃຈທີ່ບົ່ງບອກເຖິງຊີວິດຂອງ ລູອີສ ບໍ່ພຽງເບິ່ງຄືວ່າມັນເປັນການກະຕຸ້ນການຂຽນຂອງລາວ. ນຶ່ງໃນຄວາມສຳເຣັດທີ່ຍິ່ງໃຫ່ຍທີ່ສຸດຂອງລາວ, ດັ່ງຕົວຢ່າງ, *ຄຣິສຕະສາສນາເທົ່ານັ້ນ, (Mere Christianity)* ລູອີສ ໄດ້ຂຽນວ່າ: "ຖ້າຂ້າພະເຈົ້າພົບໃນຕົວເອງວ່າຄວາມປາຖນາທີ່ບໍ່ມີປະສົບການໃດໆໃນໂລກນີ້ທີ່ສາມາດພໍໃຈໄດ້, ຄຳອະທິບາຍທີ່ເປັນໄປໄດ້ທີ່ສຸດກໍຄືວ່າຂ້າພະເຈົ້າຖືກສ້າງຂຶ້ນສຳລັບໂລກອື່ນ, ຖ້າບໍ່ມີຄວາມສຸກໃດໆຝ່າຍໂລກນີ້ຂອງຂ້າພະເຈົ້າພໍໃຈມັນ, ນັ້ນບໍ່ໄດ້ພິສູດວ່າຈັກກະວານແມ່ນການສໍ້ໂກງ. ຄວາມເພິ່ງພໍໃຈໃນໂລກບໍ່ເຄີຍມີຄວາມໝາຍທີ່ຈະເຮັດໃຫ້ມັນພໍໃຈ, ແຕ່ວ່າພຽງແຕ່ເຮັດໃຫ້ມັນຕື່ນຕົວ, ເພື່ອແນະນຳສິ່ງທີ່ແທ້ຈິງ...ຂ້າພະເຈົ້າຕ້ອງຮັກສາຕົວເອງໃຫ້ມີຄວາມປາຖນາສຳລັບປະເທດທີ່ແທ້ຈິງຂອງຂ້າພະເຈົ້າ, ຊຶ່ງຂ້າພະເຈົ້າຈະບໍ່ພົບຈົນກ່ວາຂ້າພະເຈົ້າຈະຕາຍ." ເນື່ອງຈາກວ່າຄຣິສຕຽນໄດ້ຮັບຊີວິດນິຣັນດອນໃນອານາຈັກຂອງພຣະເຈົ້າທີ່ກຳລັງຈະມາ, ພວກເຮົາມີຄວາມຫວັງ. ການທົດລອງຕ່າງໆໃນຊີວິດນີ້ໃນມື້ນີ້ງຈະນຳໄປສູ່ຊີວິດແຫ່ງຄວາມສຸກແລະຄວາມສງົບຊົ່ວນິຣັນດອນ.

**ພຣະຄຳພີກ່າວວ່າຢ່າງໃດ?** ( ເບິ່ງຕາມຫົວຂໍ້ 1, 2, ແລະ 3, )

**<u>ສຶກສາພຣະຄັມພີ</u>**

## 1. 1 ເປໂຕ 5:5ຂ-7

*5ຂ....ພວກທ່ານທຸກຄົນຈົ່ງເອົາຄວາມຖ່ອມໃຈເປັນເຄື່ອງຄາດແອວໄວ້ ໃນການປະຕິບັດເຊິ່ງກັນແລະກັນ ດ້ວຍວ່າ, "ພຣະເຈົ້າຊົງຕໍ່ສູ້ຄົນທີ່ຈອງຫອງ ແຕ່ຊົງປະທານພຣະຄຸນແກ່ຄົນທີ່ຖ່ອມໃຈລົງ" 6. ເຫດສັນນັ້ນທ່ານທັງຫລາຍ ຈົ່ງຖ່ອມໃຈລົງໃຕ້ພຣະຫັດອັນຊົງຣິດຂອງພຣະເຈົ້າ ເພື່ອວ່າພຣະອົງຈະຊົງຍົກພວກທ່ານຂຶ້ນເມື່ອເຖິງເວລາອັນຄວນ. 7. ຈົ່ງປະຄວາມກະວົນກະວາຍຂອງພວກທ່ານໄວ້ກັບພຣະອົງ ເພາະວ່າພຣະອົງຊົງຫ່ວງໄຍພວກທ່ານຢູ່.*

ເປໂຕໃຊ້ຄຳເວົ້າທີ່ເປັນເອກລັກສະເພາະທີ່ສຸດທີ່ພວກເຮົາແປເປັນພາສາອັງກິດວ່າ "ເຄື່ອງນຸ່ງ" ມັນເປັນເວລາດຽວທີ່ພວກເຮົາເຫັນຄຳສັບຊຶ່ງບໍ່ທັມມະດາທີ່ໃຊ້ໃນພຣະຄັມພີໃໝ່, ແລະມັນໄດ້ບັນລະຍາຍເຖິງການນຸ່ງຜ້າກັນເປື້ອນໂດຍຂ້າທາດ. ຂ້າທາດໄດ້ນຸ່ງຜ້າກັນເປື້ອນຫໍ່ຫຸ້ມເຄື່ອງນຸ່ງຊັ້ນນອກຂອງເຂົາ. ແລະມັນຈຳແນກຄວາມແຕກຕ່າງພວກເຂົາຈາກພວກທີ່ມີອິສຣະ. ເປໂຕກຳລັງສັ່ງໃຫ້ພວກທີ່ເຊື່ອ ຖືຄວາມຖ່ອມຕົວຄືກັບເຄື່ອງນຸ່ງຂອງຂ້າທາດ.

ແນ່ນອນເປໂຕຈະຕ້ອງມີຄວາມຄິດດັ່ງກ່າວໃນເວລາພຣະເຢຊູຖອດເສື້ອຄຸມຊັ້ນນອກອອກມັດອ້ອມແອວຂອງ

ພຣະອົງ, ແລ້ວເອົາອ່າງນໍ້າມາ, ແລະລ້າງຕີນຂອງພວກສາວົກ. ເຫຼົ່າສາວົກເກີດຄວາມຜິດຫວັງບໍ່ອາດຍອມຮັບໄດ້ກັບທ່າທີການກະທຳຂອງພຣະອົງເມື່ອພຣະເຢຊູຖອດເສື້ອຄຸມຂອງພຣະອົງອອກແລະລ້າງຕີນພວກເຂົາ. ບາງທີເຫດການເຮັດໃຫ້ບໍ່ພໍໃຈວ່າພຣະບຸດຂອງພຣະເຈົ້າເຮັດໃຫ້ເສື່ອມເສັຽກຽດໃນການເຮັດຢ່າງນັ້ນ, ເປໂຕກໍຕໍ່ວ່າທັນທີ. ເພື່ອສຣູບການລ້າງຕີນຂອງພວກສາວົກຂອງພຣະອົງພຣະເຢຊູໄດ້ບອກກັບເຂົາວ່າ: "ທ່ານທັງຫຼາຍເອີ້ນເຮົາວ່າອາຈານ-ແລະນາຍເຈົ້າພວກທ່ານເອີ້ນຖືກຕ້ອງແລ້ວເພາະເຮົາເປັນຢ່າງນັ້ນ. ເຫດສັນນັ້ນເຮົາຜູ້ເປັນນາຍແລະອາຈານຂອງພວກທ່ານໄດ້ລ້າງຕີນຂອງທ່ານ ພວກທ່ານກໍຄວນລ້າງຕີນຂອງກັນແລະກັນເໝືອນກັນ. ດ້ວຍວ່າເຮົາໄດ້ວາງແບບຢ່າງໃຫ້ພວກທ່ານແລ້ວ ເພື່ອທ່ານຈະໄດ້ເຮັດເໝືອນດັ່ງເຮົາໄດ້ເຮັດຕໍ່ພວກທ່ານແລ້ວ." (ໂຢຮັນ 13:12ຂ-15). ເປໂຕໄດ້ຮຽນຮູ້ທີ່ຈະເຮັດຕາມຕົວຢ່າງນີ້, ແລະດຽວນີ້ທ່ານກໍກຳລັງຮຽກຮ້ອງໃຫ້ຄົນອື່ນໆເຮັດຄືກັນ: "ຈົ່ງຫຸ້ມຫໍ່ຕົວທ່ານດ້ວຍຄວາມຖ່ອມຕົວ." ຄວາມຖ່ອມຕົວຈະສ້າງບັນຍາກາດແຫ່ງຄວາມສນິດສນົມກັບພຣະເຈົ້າ. ບໍ່ມີມະນຸດຄົນໃດທີ່ສາມາດເດີນກ່ອນໜ້າພຣະຜູ້ຊ່ວຍໄດ້. ຄວາມຖ່ອມຕົວເປັນການກ່ຽວຂ້ອງໂດຍກົງຕໍ່ການຍອມຈຳນົນຂອງພວກເຮົາຕໍ່ພຣະເຈົ້າແລະສິດທິອຳນາດຂອງພຣະອົງ, ເມື່ອເຮົາຍອມຢູ່ໃຕ້ພຣະຫັດອັນຍິ່ງໃຫ່ຍຂອງພຣະອົງ, ພວກເຮົາກໍຍອມຮັບຮູ້ການຄວບຄຸມດູແລຂອງພຣະອົງຕໍ່ຊີວິດຂອງພວກເຮົາ, ພຣະຄຸນຂອງພຣະອົງໃນຄວາມທຸກທໍຣະມານຂອງພວກເຮົາ, ແລະການເສັຽສຣະຂອງພຣະບຸດອົງດຽວຂອງພຣະເຈົ້າເພື່ອໃຫ້ພວກເຮົາມີຄວາມຫວັງທີ່ມີຊີວິດຢູ່.

ການຖ່ອມຕົວເປັນທີ່ຍອມຮັບຮູ້ວ່າເປັນຂອງຂວັນທີ່ບໍ່ສາມາດໄດ້ມາຈາກມືຂອງພວກເຮົາເອງ; ແທນທີ່ຈະເປັນແນວນັ້ນ, ມັນເປັນຂອງພຣະຣາຊທານແຫ່ງພຣະຄຸນຈາກພຣະບິດາຜູ້ທີ່ຊົງຮັກ, ຜູ້ທີ່ເປັນຫ່ວງເປັນໄຍພວກເຮົາຢ່າງເລິກເຊິ່ງ. ໃນການຍອມຈຳນົນຖ່ອມຕົວລົງຕໍ່ພຣະເຈົ້າ, ພວກເຮົາກໍຍອມມອບຄວາມກັງວົນສົນໃຈທັງໝົດຂອງເຮົາຕໍ່ພຣະເຈົ້າ. ພວກເຮົາຍອມຮັບວ່າພວກເຮົາບໍ່ສາມາດເຮັດສິ່ງໃດໄດ້ກັບພາຣະທີ່ໜັກຂອງພວກເຮົາ. ແຕ່ພຣະເຈົ້າຜູ້ທີ່ດູແລພວກເຮົາກໍເຮັດໄດ້, ເຖິງແມ່ນວ່າຄວາມຖ່ອມຕົວ, ບໍ່ແມ່ນສະຖານະພາບສຸດທ້າຍຂອງພວກເຮົາ. ແຕ່ວັນນຶ່ງເມື່ອຣາຊອານາຈັກຂອງພຣະເຈົ້າໄດ້ເຂົ້າມາຢ່າງເຕັມສ່ວນ, ພວກເຮົາຈະໄດ້ຮັບກຽດ, ພວກເຮົາຈະໄດ້ຮັບຖືກຍົກຂຶ້ນໂດຍພຣະຄຸນຂອງພຣະເຈົ້າ.

## 2. 1 ເປໂຕ 5:8-9

*8. ທ່ານທັງຫລາຍຈົ່ງຄອຍລະວັງຕົວແລະເຝົ້າຢູ່ ດ້ວຍວ່າສັດຕຣູຂອງພວກທ່ານຄືມານ ທຽວວົນວຽນໄປມາເໝືອນ ໂຕສິງທີ່ແຜດສຽງຊອກຫາຄົນທີ່ມັນຈະກັດກິນໄດ້. 9. ຈົ່ງຕໍ່ສູ້ກັບສັດຕຣູນັ້ນດ້ວຍໃຈໝັ້ນຄົງໃນຄວາມເຊື່ອ ໂດຍຮູ້ແລ້ວວ່າ ພີ່ນ້ອງຂອງພວກທ່ານທົ່ວໂລກກໍປະສົບກັບຄວາມທຸກລຳບາກຢ່າງດຽວກັນນີ້.*

ເຖິງແມ່ນພວກເຮົາມີຄວາມຖ່ອມຕົວຢູ່ຕໍ່ໜ້າພຣະພັກພຣະເຈົ້າ, ພວກເຮົາກໍຄວນຕຽມພ້ອມແລະເຝົ້າລະວັງ. ພວກເຮົາບໍ່ຄວນປມາດຫຼືຕີລາຄາຄວາມໂຫດຮ້າຍຂອງສັດຕູຕໍ່າເກີນໄປ. ເປໂຕໄດ້ບັນລະຍາຍເຖິງສັດຕູເປັນເໝືອນສິງໂຕທີ່ມີກຳລັງແຂງແຮງ, ແຜດສຽງຮ້ອງຄຳລາມ, ຢ່າງບໍ່ຢຸດຍັ້ງ, ແນ່ນອນ, ຄຳຕັກເຕືອນເຫຼົ່ານີ້ບໍ່ໄດ້ມີຈຸດປະສົງເຮັດໃຫ້ເຮົາຢ້ານ, ແຕ່ໃຫ້ພວກເຮົາມີສະຕິລະວັງຕົວ. ການຕໍ່ສູ້ນີ້ແມ່ນຮຸນແຮງ, ຄູ່ຕໍ່ສູ້ເປັນເຣື່ອງຈິງ, ມື້ວັນກໍຊົ່ວຮ້າຍ, ແລະເວລາກໍ່ສັ້ນເຂົ້າມາ! ພວກເຮົາບໍ່ສາມາດນອນພັກຜ່ອນໄດ້ໃນຂນະທີ່ຊາຕານກຳລັງທ່ຽວວົນວຽນໄປມາຢູ່ນີ້.

| ທ່ານຈະອະທິບາຍວິທີການທີ່ຜີມານເຮັດວຽກໃນສັງຄົມຂອງພວກເຮົາຢ່າງໃດ? |
| --- |

ຜີມານແມ່ນແຂງແຮງ, ແຕ່ຄວາມເຊື່ອຂອງພວກເຮົາເປັນພື້ນຖານສຳລັບການຕໍ່ຕ້ານຂອງພວກເຮົາ. ພວກເຮົາບໍ່ໄດ້ຕໍ່ສູ້ຜ່ານການຕັດສິນໃຈຫຼືຄວາມພະຍາຍາມທີ່ເດັດຂາດ. ພວກເຮົາຕໍ່ສູ້ກັບຜີມານໃນການຮັບປະກັນຢ່າງໜັກແໜ້ນ

ຂອງພວກເຮົາທີ່ເຊື່ອໝັ້ນວ່າມານຊາຕານເປັນສັດຕູທີ່ພ່າຍແພ້ແລະພວກເຮົາຮັບໃຊ້ກະສັດທີ່ເອົາຊະນະມັນໄດ້.

ມັນເປັນໜ້າສົນໃຈວ່າທ່ານເປໂຕໄດ້ນຳເອົາຄວາມສົນໃຈຕໍ່ຄວາມທຸກທໍຣະມານທີ່ຄ້າຍຄືກັນຂອງພວກທີ່ເຊື່ອໃນທົ່ວໂລກຂະນະທີ່ທ່ານຍົກລະດັບຄວາມຕັດສິນໃຈໃຫ້ເທົ່າທຽມກັນຂອງຜູ້ອ່ານຂອງທ່ານ. ພວກເຂົາຈະສາມາດຕໍ່ສູ້ກັບຊາຕານແລະຍືນຢູ່ຢ່າງໝັ້ນຄົງໄດ້ຢ່າງໃດ? ພວກເຂົາສາມາດຕໍ່ສູ້ໄດ້ດ້ວຍຄວາມເຂົ້າໃຈວ່າ ພວກເຂົາບໍ່ໄດ້ຕໍ່ສູ້ພຽງຄົນດຽວແລະພວກທີ່ເຊື່ອກໍກຳລັງປະສົບ-ແລະຕໍ່ສູ້-ການລໍ້ລວງແລະຄວາມທຸກທໍຣະມານອັນດຽວກັນ.

ຄວາມຈິງກໍຄືກັນໃນທຸກວັນນີ້. ເມື່ອປະເຊີນໜ້າກັບການຂົ່ມເຫັງຫຼືການທົດລອງຫຼືວັນຫຍຸ້ງຍາກ, ພວກເຮົາຕ້ອງຈຳໄວ້ວ່າພວກເຮົາບໍ່ໄດ້ຢູ່ຄົນດຽວ; ຜູ້ເຊື່ອຄົນອື່ນໆໃນພຣະກາຍຂອງພຣະຄຣິດແມ່ນກຳລັງປະສົບກັບຄວາມທົນທຸກທໍຣະມານທີ່ຮ້າຍແຮງກ່ວາເກົ່າໃນທົ່ວທຸກມຸມໂລກ. ຈົ່ງຄົ້ນຄ້ວດ່ວນໃນອິນເທີແນັດກ່ຽວກັບການຂົ່ມເຫັງຄຣິສຕະຈັກ, ແລະທ່ານຈະຖືກນຳມາສູ່ການຍອມຮັບຮູ້ສິ່ງທີ່ໜ້າສົນໃຈກ່ຽວກັບພວກທີ່ເຊື່ອໃນພາກສ່ວນອື່ນຂອງໂລກທີ່ປະເຊີນໜ້າປະຈຳທຸກວັນ. ທຸກໆເດືອນ, ໂດຍສະເລັ່ຍ:

- ຄຣິສຕຽນ 345 ຄົນຖືກຂ້າຕາຍຍ້ອນເຫດຜົນກ່ຽວກັບຄວາມເຊື່ອ.
- ໂບດ 105 ແຫ່ງແລະອາຄານຄຣິສຕະຈັກຖືກເຜົາທຳລາຍໂຈມຕີ.
- ຊາວຄຣິສຕຽນ 219 ຄົນຖືກກັກຂັງໂດຍບໍ່ມີການດຳເນີນຄະດີ, ຖືກຈັບຕົວ, ຕັດສິນລົງໂທດແລະຈຳຄຸກ.

ເມື່ອພວກເຮົາຮູ້ຈັກຄຣິສຕະຈັກທີ່ຖືກຂົ່ມເຫັງໃນທົ່ວໂລກ, ຂໍໃຫ້ທັນຄວາມຮັບຮູ້ນັ້ນເຂົ້າມາສູ່ການອະທິຖານ. ຂໍອະທິຖານເພື່ອຄຣິສຕະຈັກທີ່ຖືກຂົ່ມເຫັງໃນທົ່ວໂລກ. ຢ່າປ່ອຍໃຫ້ເຣື່ອງຂອງພວກເຂົາເປັນພຽງການກະຕຸ້ນຄວາມຮູ້ສຶກຂອງພວກເຮົາ, ແຕ່ໃຫ້ພວກມັນຊຸກຍູ້ພວກເຮົາໃຫ້ເຮັດບາງສິ່ງຜ່ານການອ້ອນວອນອະທິຖານຂອງພວກເຮົາ.

| ມີວິທີໃດແດ່ທີ່ພວກເຮົາສາມາດຕໍ່ຕ້ານກັບຜີມານໄດ້? |
|---|

## 3. 1 ເປໂຕ 5:10-11

*10. ແລະເມື່ອທ່ານທັງຫລາຍໄດ້ທົນທຸກຢູ່ຊົ່ວຂະນະນຶ່ງແລ້ວ ພຣະເຈົ້າຜູ້ຊົງພຣະຄຸນທັງຫມົດ, ຜູ້ໄດ້ຊົງເອີ້ນພວກທ່ານໃຫ້ເຂົ້າໃນສະງ່າຣາສີອັນຕລອດໄປໃນພຣະຄຣິດ ພຣະອົງເອງຈະຊົງໂຜດແປງໃຈພວກທ່ານໃຫ້ຕັ້ງຂຶ້ນໃຫມ່ແລະຕັ້ງຫມັ້ນຄົງຢູ່ໃຫ້ມີກຳລັງຂຶ້ນ ແລະຊົງບັນດານໃຫ້ມີຮາກອັນແຫນ້ນຫນາ. 11. ຣິດທານຸພາບຈົ່ງມີແດ່ພຣະອົງຕລອດໄປເປັນນິດ ອາແມນ.*

ເປໂຕໄດ້ຍົກຍ້ອງຄວາມສລາດສລຽວຂອງພຣະເຈົ້າຈາກຜູ້ທີ່ໄດ້ຮັບພຣະຄຸນທຸກຢ່າງ. ພວກເຮົາໄດ້ຮັບ-ຄວາມຫັວງ, ການຊົງຮຽກເອີ້ນ, ການຊົງປະທານ, ກຳລັງ, ການຄືນດີໃໝ່, ຄວາມຊົມຊື່ນຍິນດີ, ຄວາມອົດທົນ, ແລະລາງວັນ. ຈາກພຣະຄຸນຂອງພຣະເຈົ້າ. ຈົ່ງເບິ່ງການກະທຳຂອງພຣະເຈົ້າທີ່ເປໂຕຍືນຢູ່ຄືກັບການສ້າງພື້ນຖານອັນໜັກແໜ້ນຂອງຄວາມຫັວງຂອງພວກເຮົາໃນພຣະຄຣິດ.

- **ຟື້ນຟູ**. ພຣະເຈົ້າສາມາດເຮັດໃຫ້ພວກເຮົາສົມບູນແລະປັບປຸງສິ່ງໃດແດ່ທີ່ອາດຈະຕ້ອງການການສ້ອມແປງ. ນີ້ສະແດງໃຫ້ເຫັນຄວາມຄິດຂອງການສ້ອມແປງມອງ(ແຫ)ຫຼືການສ້ອມແປງກະດູກໃຫ້ເຂົ້າທີ່ເມື່ອມັນເຄື່ອນອອກຈາກຂໍ້ຕໍ່. ພຣະເຈົ້າເອງຈະຈັດຕັ້ງພວກເຮົາໃຫ້ຖືກຕ້ອງເພື່ອຈະບໍ່ມີສິ່ງໃດຂາດເຂີນໃນຂະນະທີ່ພຣະອົງຊົງດັດແປງພວກເຮົາໃຫ້ເປັນເໝືອນພຣະບຸດຂອງພຣະອົງ.
- **ການຊົງສ້າງ**. ນີ້ໝາຍເຖິງການເສີມສ້າງໃຜຜູ້ນຶ່ງໃຫ້ເຕີບໃຫຍ່, ແລະມັນນຳຄວາມຄິດໃນການມີບາດກ້າວອັນໝັ້ນຄົງ. ເມື່ອພຣະອົງໄດ້ຊົງຕັ້ງພວກເຮົາໃຫ້ຄືນດີໃໝ່ແລ້ວ, ພຣະເຈົ້າກໍຊົງປະທານພື້ນຖານອັນໝັ້ນຄົງແຂງແກ່ນໃຕ້ຕີນຂອງພວກເຮົາຂະນະທີ່ພວກເຮົາຍັງດຳເນີນຊີວິດຕາມຄວາມລອດຂອງພວກເຮົາໃນຮູບແບບທີ່ເໝາະສົມກັບພຣະກິດຕິຄຸນ (ຟີລິບປ່ອຍ1:27).

- **ສ້າງຄວາມເຂັ້ມແຂງ**. ການໃຊ້ຄໍານີ້ຂອງເປໂຕແມ່ນເປັນຄໍາອະທິບາຍໃນຕົວມັນເອງ, ເພາະວ່າມັນມາຈາກຮາກຄໍາສັບທີ່ມີຄວາມໝາຍເຖິງຄວາມເຂັ້ມແຂງ. ມັນເປັນການລະນຶກເຖິງຄໍາສັນຍາຂອງພຣະເຈົ້າທີ່ບອກຕໍ່ຊົນຊາດອິສຣາເອນວ່າ: ຢ່າສູ້ຢ້ານ, ເພາະວ່າເຮົາຢູ່ກັບເຈົ້າ; ບໍ່ຕ້ອງຢ້ານ, ເພາະເຮົາແມ່ນພຣະເຈົ້າຂອງເຈົ້າ, ເຮົາຈະໃຫ້ເຈົ້າເຂັ້ມແຂງ; ເຮົາຈະຊ່ວຍເຈົ້າ; ເຮົາຈະຖືເຈົ້າໄວ້ໃນພຣະຫັດຊອບທັມເບື້ອງຂວາຂອງເຮົາ" (ເອຊາຢາ 41:10) ໃນຄວາມອ່ອນແອຂອງພວກເຮົາ, ພຣະເຈົ້າສະແດງຄວາມເຂັ້ມແຂງຂອງພຣະອົງຜ່ານພວກເຮົາ (2 ໂກຣິນໂທ 12: 9-10).
- **ການສນັບສນູນ**. ພຣະເຈົ້າໄດ້ວາງພື້ນຖານຂອງຊີວິດຂອງພວກເຮົາ, ໂດຍແມ່ນພຣະເຢຊູເອງທີ່ເປັນຫີນເສົາເອກ(ພື້ນຖານ)ຂອງພວກເຮົາ (1 ເປໂຕ 2:6-7). ພຣະເຢຊູໃຊ້ຄໍາເວົ້າອັນດຽວກັນນັ້ນເມື່ອພຣະອົງອະທິບາຍວ່າຊາຍທີ່ສລາດສ້າງເຮືອນຂອງລາວຢູ່ເທິງພື້ນຖານດ່ານຫີນແຂງ, ສະນັ້ນເຮັດໃຫ້ມັນສາມາດຕ້ານທານກັບຝົນຕົກ, ນໍ້າຖ້ວມລົ້ນທີ່ພັດທົ່ງມາແລະຄື້ນລົມແຮງພັດ (ມັດທາຍ 7:24-25).

ຂ້າພະເຈົ້າມັກຄໍາມ້ວນທ້າຍຈົດໝາຍເຊິ່ງເປໂຕສຣູບໄວ້ຢ່າງສວຍງາມປະຫຼາດໃຈໃນຈົດໝາຍຂອງທ່ານ. ດັ່ງທີ່ທ່ານນໍາພາພວກເຮົາໄປສູ່ຮູບພາບທີ່ໃຫ່ຽກວ່າ. ພວກເຮົາອາດຈະ "ທົນທຸກທໍຣະມານພຽງຊົ່ວຄາວ" (ຂໍ້ 10), ແຕ່ມັນຄ້າຍຄືມືຂອງພຣະອົງວາງລົງເບົາໆທີ່ປາຍຄາງຂອງພວກເຮົາແລະຍົກພວກເຮົາຂຶ້ນໃຫ້ເພັ່ງເບິ່ງຈາກທີ່ເປັນຂອງຊົ່ວຄາວໄປສູ່ອັນທີ່ຄົງຢູ່ເປັນນິດ. ພວກເຮົາໄດ້ຖືກເອີ້ນໃຫ້ຮັບສະງ່າຣາສີນິຣັນດອນຮ່ວມກັນກັບພຣະຄຣິດ. ສີ່ຄໍາເວົ້າທີ່ສ່ອງແສງຄືກັບແສງສວ່າງໃນຄວາມມືດແລະຄວາມຫຍຸ້ງຍາກ: "ຍັງອີກໜ້ອຍນຶ່ງ." ດ້ວຍມຸມມອງສູ່ນິຣັນດອນ, ຄວາມທຸກທໍຣະມານໃດໆທີ່ພວກເຮົາປະສົບແມ່ນສັ້ນແລະມີບ່ອນສຸດ. ມັນຈະບໍ່ຢູ່ຕລອດໄປ, ແລະມັນຈະບໍ່ປົກປິດຊີວິດທັງໝົດຂອງພວກເຮົາກັບພຣະຄຣິດ.

| ຄວາມຫວັງອັນນິຣັນດອນຂອງທ່ານມີອິດທິພົນຕໍ່ຊີວິດປະຈໍາວັນຂອງທ່ານແນວໃດ? |
|---|

## <u>ການນໍາໃຊ້ໃນຊີວິດ.</u>

ທ່ານຈະເຮັດແນວໃດເພື່ອຮັກສາທັສນະຄະຕິນິຣັນດອນກ່ຽວກັບຄວາມຫວັງອັນເປັນພອນຂອງທ່ານໃນພຣະຄຣິດ? ຈົ່ງເລືອກເອົານຶ່ງຂໍ້ຂອງການນໍາໃຊ້ຕໍ່ລົງໄປນີ້:

- **ບັນທຶກ.** ທົບທວນຄືນວ່າພາກຮຽນຫຼືການສຶກສາທີ່ກາພາກໄດ້ສອນທ່ານກ່ຽວກັບຄວາມຫວັງ. ບັນທຶກຄວາມເຂົ້າໃຈຂອງທ່ານກ່ຽວກັບຄວາມຫວັງແລະຜົນກະທົບຂອງມັນທີ່ມີຕໍ່ທ່ານ.
- **ອະທິຖານ.** ຂຽນພຣະທໍາ 1 ເປໂຕ 5:5ຂ-11 ແລະໃຊ້ມັນເປັນຄູ່ມືສໍາລັບການອະທິຖານ. ຂນະທີ່ທ່ານອະທິຖານ, ຈົ່ງຍອມຈໍານົນຕໍ່ພຣະຜູ້ເປັນເຈົ້າແລະພຣະປະສົງນິຣັນຂອງພຣະອົງສໍາລັບຊີວິດຂອງທ່ານ.
- **ອະທິຖານຮ່ວມກັນ.** ເຂົ້າຮ່ວມກັບຜູ້ເຊື່ອຄົນອື່ນໆຈໍານວນນຶ່ງແລະອະທິຖານຮ່ວມກັນສໍາລັບຄຣິສຕະຈັກທີ່ຖືກຂົ່ມເຫັງ. ບັນຊີລາຍຊື່ການອະທິຖານທີ່ເປັນປໂຍດສາມາດພົບໄດ້ທາງອິນເທີແນັດ.

ພວກເຮົາບໍ່ອາດເຫັນປະເພດຂອງຄວາມໂສກເສົ້າແລະຄວາມເຈັບປວດທີ່ ຊີ ແອສ ລູອິສ ໄດ້ປະສົບໃນຊີວິດຂອງລາວ, ແຕ່ຄວາມທຸກທໍຣະມານປະເພດທີ່ແຕກຕ່າງແນ່ນອນຈະມາເຖິງ. ຖ້າພວກເຮົາຈະແນມເບິ່ງຄວາມຫັວງໃນອະນາຄົດຂອງພວກເຮົາ, ພວກເຮົາຈະຍົກຍ້ອງພຣະເຈົ້າໃນທີ່ນີ້ແລະດຽວນີ້.

ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ http://lsbf.us ແປໂດຍVR.